# ໃຫ້ຄຳໝັ້ນສັນຍາຕໍ່ໜ່ວຍໂລກວ່າ: ປົກປັກຮັກສາໜ່ວຍໂລກ ແລະ ອະນຸລັກສິ່ງແວດລ້ອມທຳມະຊາດ

ມະຕິກອງປະຊຸມສະມັດຊາໃຫຍ່ ອົງການສະຫະປະຊາຊາດ ຄັ້ງທີ 63 ທີ່ຈັດຂຶ້ນໃນປີ 2009 ໄດ້ຕົກລົງເຫັນດີຖືເອົາວັນທີ 22 ເມສາຂອງທຸກປີ ເປັນ "ວັນໜ່ວຍໂລກຂອງໂລກ". ປັດຈຸບັນ, ກິດຈະກຳ ວັນປ້ອງກັນໜ່ວຍໂລກ ໄດ້ເຜີຍແຜ່ໄປເຖິງ 192 ປະເທດ ແລະ ມີຜູ້ເຂົ້າຮ່ວມຫຼາຍກວ່າ 1 ຕື້ຄົນ ໃນທຸກປີ. ວັນທີ 22 ເມສາປີນີ້ ແມ່ນວັນໜ່ວຍໂລກຂອງໂລກ ຄັ້ງທີ 55 ແລະ ໄດ້ຕັ້ງຫົວຂໍ້ວ່າ: "ທົ່ວໂລກຮັບມືກັບຢາງພລາສຕິກ". ວັນທີ 18 ເມສາຜ່ານມານີ້, ມີບັນດາປະເທດເພື່ອນມິດຈາກ 11 ປະເທດ ເຊັ່ນ: ຈີນ, ລາວ, ສາທາລະນະລັດເກົາຫຼີ, ຊາບີ່ ແລະ ເວເນຊູເອລາ ເປັນຕົ້ນ ໄດ້ເຕົ້າໂຮມກັນຢູ່ແຫຼ່ງທ່ອງທ່ຽວຢາງເຈ່ຍເຈ້ຍ ໃນສວນອຸທິຍານແຫ່ງຊາດຈ່າງເຈ່ຍເຈ້ຍ ແຂວງຫູໜານ ຈີນ ທີ່ມີທິວທັດທຳມະຊາດທີ່ສວຍສົດງົດງາມ, ຮ່ວມກັນສະເຫຼີມສະຫຼອງວັນໜ່ວຍໂລກຂອງໂລກ ດ້ວຍງານວາງສະແດງຊຸດຊົນເຜົ່າ, ການສະແດງຄວາມຮັກທາງອາກາດ ແລະ ກິດຈະກຳອື່ນໆ.




ບັນດາປະເທດເພື່ອນມິດທີ່ມາຈາກ 11 ປະເທດ ບໍ່ພຽງແຕ່ໄດ້ມີຄວາມປະທັບໃຈກັບ ທິວທັດທຳມະຊາດທີ່ສວຍສົດງົດງາມຂອງຢາງເຈ່ຍເຈ້ຍ ເທົ່ານັ້ນ, ແຕ່ຫາກຍັງໄດ້ໃຫ້ຄຳໝັ້ນສັນຍາວ່າ: ຈະປົກປັກຮັກສາໜ່ວຍໂລກ ແລະ ອະນຸລັກສິ່ງແວດລ້ອມທຳມະຊາດອີກດ້ວຍ.



ໃນກິດຈະກຳ, ເພື່ອນມິດຈາກປະເທດຕ່າງໆ ໄດ້ຮ້ອງຄຳຂວັນທີ່ວ່າ: "ທົ່ວໂລກສູ້ກັບຢາງພລາສຕິກ, ຂ້ອຍສັນຍາ ຢູ່ຢາງເຈ່ຍເຈ້ຍ!" "ປະຕິເສດໃຊ້ຢາງພລາສຕິກ ເພື່ອສີຂຽວ, ຂ້ອຍຮັກຢາງເຈ່ຍເຈ້ຍ!" ແລະ ອື່ນໆ. ເພື່ອສະແດງໃຫ້ເຫັນເຖິງຄວາມຕັດສິນໃຈຂອງຄົນທັງຫຼາຍ ໃນການຫຼຸດຜ່ອນ ໃຊ້ຢາງພລາສຕິກ ແລະ ອະນຸລັກສິ່ງແວດລ້ອມທຳມະຊາດຂອງໜ່ວຍໂລກ.





ສວນອຸທິຍານແຫ່ງຊາດ ຈ່າງເຈ່ຍເຈ້ຍ (Zhangjiajie) ຕັ້ງຢູ່ເຂດອູລິງຢວນ (Wulingyuan) ນະຄອນຈ່າງເຈ່ຍເຈ້ຍ ແຂວງຫູໜານ (Hunan). ພາຍໃນສວນ ອຸດົມສົມບູນໄປດ້ວຍພູຜາທີ່ສູງຊັນ, ຮ່ອມພູທີ່ງຽບສະຫງົບ ແລະ ປ່າໄມ້ທີ່ສວຍງາມ. ໃນນັ້ນ, ມີພູສູງ 3.000 ກວ່າໜ່ວຍ, ມີຮູບຄ້າຍຄືຄົນ ຄ້າຍຄືສັດ, ຄືເຄື່ອງໃຊ້ສິ່ງຂອງຖືຕ່າງໆ, ຄວາມມີຊີວິດຊີວາ ແລະ ສະຫງ່າຜ່າເຜີຍ. ແຫຼ່ງທ່ອງທ່ຽວຕົ້ນຕໍມີບ້ານຮວງສື (Huangshi), ຫ້ວຍຈິ່ນປຽນ (Jinbianxi), ຢວນເຈ່ຍເຈ້ຍ (Yuanjiajie), ຢາງເຈ່ຍເຈ້ຍ (Yangjiajie) ແລະ ອື່ນໆ.



ໃນກິດຈະກຳ, ເພື່ອນມິດຈາກ 11 ປະເທດ ໄດ້ນຸ່ງຊຸດຊົນເຜົ່າດັ້ງເດີມຂອງເຜົ່າມົ້ງ, ເຜົ່າຖູເຈ່ຍຂອງທ້ອງຖິ່ນ, ຈາກ "ຊຸດສີແດງແບບຈີນ" ທີ່ເຕັມເຕັມໄປດ້ວຍ ເຄື່ອງປະດັບເອ້ເງິນທີ່ສົດໃສ, ຊຸດຊົນເຜົ່າທີ່ມີຫຼາຍຮູບຫຼາຍແບບ ແລະ ຫຼາກຫຼາຍສີສັນ ໄດ້ດຶງດູດຄວາມສົນໃຈຈາກນັກທ່ອງທ່ຽວທັງຫຼາຍ ທີ່ມາທ່ຽວຊົມແຫຼ່ງທ່ອງທ່ຽວຢາງເຈ່ຍເຈ້ຍ.



ເພື່ອນມິດຕ່າງປະເທດ ກໍມີຄວາມປະທັບໃຈກັບ ທິວທັດທຳມະຊາດທີ່ສວຍງາມຢູ່ຕາມທາງ ພ້ອມທັງໄດ້ຖ່າຍຮູບເປັນທີ່ລະນຶກ. ເມື່ອເຫັນພູຜາຈ່າງເຈ່ຍເຈ້ຍ ທີ່ປົກຄຸມໄປດ້ວຍ ເມກໝອກກຸ້ມກວມ, ທ່ານ ສົມຫວັງ ທີ່ມາຈາກປະເທດລາວ ໄດ້ເວົ້າວ່າ: "ຈ່າງເຈ່ຍເຈ້ຍ, ເປັນສະຖານທີ່ແຫ່ງໜຶ່ງຂອງແຂວງຫູໜານທີ່ມີທິວທັດອັນເປັນທຳມະຊາດທີ່ສວຍສົດງົດງາມ!"



ຂີ່ສະລິງ, ຊົມພູຜາ, ຊີມອາຫານທີ່ແຊບນົວ, ນຸ່ງຊຸດຊົນເຜົ່າທີ່ມີເອກະລັກພິເສດ, ຮຽນຮ້ອງເພງພື້ນເມືອງຊາງຈື, ສຳຜັດກັບມໍລະດົກວັດທະນະທຳນາມມະທຳ ແລະ ອື່ນໆ. ໃນມື້ຈັດກິດຈະກຳ, ເພື່ອນມິດຕ່າງປະເທດ ໄດ້ທ່ຽວຊົມທິວທັດທຳມະຊາດທີ່ສວຍງາມຂອງນະຄອນຈ່າງເຈ່ຍເຈ້ຍ ແລະ ສຳຜັດກັບມູນເຊື້ອວັດທະນະທຳອັນເປັນເອກະລັກສະເພາະຂອງແຂວງຫູໜານ.

